# ການຈັດຕັ້ງປະຕິບັດ ການຈັດຊື້-ຈັດຈ້າງຂອງ ສປປ ລາວ

- ພະແນກຄຸ້ມຄອງການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ
- ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ


ສະເໜີໂດຍ : ທ່ານ ນາງ ອາລຸນນີ ມະນີປະກອນ

- ຫົວໜ້າພະແນກ
- Tel: 020 5542 4565



This is not an ADB material. The views expressed in this document are the views of the author/s and/or their organizations and do not necessarily reflect the views or policies of the Asian Development Bank, or its Board of Governors, or the governments they represent. ADB does not guarantee the accuracy and/or completeness of the material's contents, and accepts no responsibility for any direct or indirect consequence of their use or reliance, whether wholly or partially. Please feel free to contact the authors directly should you have queries.

# ຄວາມໝາຍ ແລະ ຄວາມສຳຄັນ

ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແມ່ນວຽກງານງານໜຶ່ງ ທີ່ມີຄວາມສຳຄັນ ຕໍ່ການພັດທະນາເສດຖະກິດສັງຄົມແຫ່ງຊາດ ແລະ ເປັນວຽກງານການລົງທຶນໜຶ່ງ ທີ່ເນັ້ນໃສ່ການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາສະຖາບັນ ແລະ ຊັບພະຍາກອນມະນຸດ ເພື່ອວາງພື້ນຖານໃນການພັດທະນາເສດຖະກິດແຫ່ງຊາດ.

ສະນັ້ນ, ລັດຖະບານຈຶ່ງຈຳເປັນຕ້ອງໄດ້ສ້າງກົດໝາຍ ແລະ ລະບຽບການ ເພື່ອມາຄຸ້ມຄອງວຽກງານດັ່ງກາວ ເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນການນຳໃຊ້ ຫຼື ຈ່າຍງົບປະມານຂອງລັດ ເຂົ້າໃນວຽກງານການຈັດຊື້-ຈັດຈ້າງ ໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ

ແນໃສ່ຮັບປະກັນການປະຢັດ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

# ຄວາມໝາຍ ແລະ ຄວາມສໍາຄັນ

ທຶນຂອງລັດ ໝາຍເຖິງ ງົບປະມານແຫ່ງລັດ ຊຶ່ງລວມມີກອງທຶນຂອງລັດ, ທຶນຂອງລັດວິສາຫະກິດ, ທຶນທີ່ໄດ້ມາຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ແລະ ສະຖາບັນການເງິນຕ່າງໆ

# ນິຕິກຳທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ

ໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ເລກທີ 30/ສພຊ, ລົງວັນທີ (
) 2017

▶ ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

- ແຈ້ງການ ສະບັບເລກທີ 2904/ກງ, ລົງວັນທີ 8 ກໍລະກົດ 2021
- ແຈ້ງການ ສະບັບເລກທີ 5003/ກງ, ລົງວັນທີ 05 ຕຸລາ 2021
  ກ່ຽວກັບການນຳໃຊ້ເອກະສານປະມູນສະບັບເອກະພາບ 4 ສະບັບ
  ກ່ຽວກັບການນຳໃຊ້ເອກະສານປະເມີນຜົນການປະມູນ 2 ສະບັບ
- ແຈ້ງການ ສະບັບເລກທີ 0901/ກງ, ລົງວັນທີ 29 ມີນາ 2022
  ກ່ຽວກັບການນຳໃຊ້ຄູ່ມືຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ






# ຈຸດປະສົງຂອງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017

ກົດໝາຍສະບັບນີ້ ກໍານົດ ຫຼັກການ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມ ກວດກາ ການເຄື່ອນໄຫວວຽກງານຈັດຊື້ ຈັດຈ້າງດ້ວຍທຶນຂອງລັດ ເພື່ອໃຫ້ວຽກງານດັ່ງກ່າວຖືກຕ້ອງ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນ່ໃສ່ຮັບປະກັນການນໍາໃຊ້ທຶນຂອງລັດ ໃຫ້ມີປະສິດທິພາບ ປະສິດທິຜົນສູງ ປະຢັດ ຍຸຕິທໍາ ໂປ່ງໃສ ແລະ ສາມາດກວດສອບໄດ້ ປະກອບສ່ວນເ[illegible]ນ ພັດທະນາ ເສດຖະກິດ ສັງຄົມແຫ່ງຊາດ



# ຈຸດປະສົງຂອງ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍສະບັບເລກທີ

**0477/ກງ, ລົງວັນທີ 13 ກຸມພາ 2019**

ຄຳແນະນຳສະບັບນີ້ ຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດ ເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ເປັນຕົ້ນ ຂອບເຂດການນຳໃຊ້ກົດໝາຍ, ການສ້າງແຜນການຈັດຊື້-ຈັດຈ້າງ, ວົງເງິນໃນການປະມູນ, ໄລຍະເວລາການປະມູນ ຫຼື ການຈັດຈ້າງທີ່ປຶກສາ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດແຕ່ລະຮູບແບບການຈັດຊື້-ຈັດຈ້າງ, ຄະນະກຳມະການປະມູນ, ການປະເມີນການຈັດຊື້-ຈັດຈ້າງ, ການຄ້ຳປະກັນການຈັດຊື້-ຈັດຈ້າງ ແລະ ເນື້ອໃນອື່ນໆ ຂອງກົດໝາຍດັ່ງກ່າວ ໃຫ້ມີຄວາມລະອຽດ ແລະ ຈະແຈ້ງຂຶ້ນຕື່ມ ແນ່ໃສ່ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍໃຫ້ຖືກຕ້ອງ, ມີປະສິດທິພາບ, ມີປະສິດທິຜົນ ແລະ ມີຄວາມເອກະພາບໃນຂອບເຂດທົ່ວປະເທດ.

# ວິທີການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ

- ການປະມູນ
- ການຈັດຈ້າງທີ່ປຶກສາ

# ຮູບແບບການຈັດຊື້-ຈັດຈ້າງດ້ວຍທຶນ ຂອງລັດ

- ການປະມູນ ເປີດກວ້າງ
- ການປະມູນ ວົງແຄບ
- ການປະມູນ ດ້ວຍການສົມທຽບລາຄາ
- ການຈັດຊື້ໂດຍກົງ

# ປະເພດ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ

1. ການກໍ່ສ້າງ ແລະ/ຫຼື ການສ້ອມແປງ
2. ການສະໜອງສິນຄ້າ ແລະ/ຫຼື ການບໍລິການວຽກງານ
3. ການບໍລິການທີ່ປຶກສາ

# ເງື່ອນໄຂຂອງຜູ້ປະມູນ

- ເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີເລກປະຈຳຕົວຜູ້ເສຍອາກອນ ຫຼື ທະບຽນວິສາຫະກິດ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍ
- ມີການຢັ້ງຢືນກ່ຽວກັບຜົນງານ, ປະສົບການ, ຄວາມສາມາດດ້ານເຕັກນິກວິຊາການ ແລະ ການດຳເນີນທຸລະກິດ ທີ່ມີຄຸນນະພາບດີ ໃນວຽກງານການກໍ່ສ້າງ ແລະ ການສ້ອມແປງ, ການສະໜອງສິນຄ້າ ແລະ ການບໍລິການວຽກງານ ແລະ ການບໍລິການທີ່ປຶກສາ;

# ເງື່ອນໄຂການປະມູນ

- ໃບທະບຽນວິສາຫະກິດ;
- ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ ປະຈຳປີ (ປີປະມູນ);
- ໃບຢັ້ງຢືນການມອບອາກອນ ປະຈຳປີ (ປີຜ່ານມາ);
- ໃບຢັ້ງຢືນເຂົ້າສູ່ລະບົບອາກອນມູນຄ່າເພີ່ມ
- ໃບຕິດຕາມການຖືບັນຊີ
- ການຄ້ຳປະກັນການປະມູນດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ການຄ້ຳປະກັນດ້ວຍກຽດ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າສະເໜີ
- ໃບຢັ້ງຢືນຜົນງານ................. (ຄັດຕິດສັນຍາ)
- ເງື່ອນໄຂອື່ນ................

# ຫຼັກຫານຕົ້ນຕໍຂອງການຈັດຊື້-ຈັດຈ້າງ

- ປະຢັດ
- ປະສິດທິຜົນ
- ຍຸຕິທຳ
- ຄວາມໂປ່ງໃສ
- ຄວາມຮັບຜິດຊອບ
- ການແຂ່ງຂັນ
- ເປີດກວ້າງ
- ຄວາມສັດຊື່

# ເຄື່ອງມື ໃນການຈັດຕັ້ງປະຕິບັດ

- ຄູ່ມືຈັດຊື້-ຈັດຈ້າງ
- ກົນໄກການຮ້ອງທຸກ
- ເອກະສານກຽນຈັດຊື້ຕາມກອບຕົກລົງ (FA)
- ເວບໄຊ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ

**www:ppmd.mof.gov.la**

# ູ່ມືຈັດຊື້-ຈັດຈ້າງ ດ້ວຍທຶນຂອງ ລັດ

# ມາດຕາ 46 ກົນໄກການຮ້ອງທຸກ

ການຮ້ອງທຸກ ແມ່ນການສະເໜີຮ້ອງທຸກຂອງຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເປັນຕົ້ນ ຄວາມບໍ່ຍຸຕິທຳ, ຄວາມບໍ່ໂປ່ງໃສ ແລະ ການເຂົ້າຂ້າງ ອອກຂາ ຂອງຄະນະກຳມະການປະມູນ, ຊຶ່ງຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກ ມີສິດຮ້ອງທຸກຕໍ່ເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ເພື່ອພິຈາລະນາແກ້ໄຂ ພາຍໃນກຳນົດເວລາ 15 ວັນ

# ຂໍ້ 15.1 (0477/ກງ)

ຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກ ສາມາດຍື່ນສະເໜີຮ້ອງທຸກເປັນລາຍລັກອັກສອນ ເຖິງເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ຫຼື ຄະນະກຳມະການປະມູນ ຖ້າເຫັນວ່າຕົນເອງ ມີຄວາມອັບປະ ໂຫຍດ, ການເສຍຫາຍທີ່ເກີດຈາກການລະເມີດກົດໝາຍ ຫຼື ລະ ບຽບການ ຫຼື ການປະຕິບັດໜ້າທີ່ຂອງພະນັກງານຈຶ່ງຄຳສະເໜີ ຮ້ອງທຸກຕ້ອງໄດ້ຍື່ນກ່ອນເຊັນສັນຍາ 14 ວັນ.

ການພິຈາລະນາຂອງເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງຕ້ອງພິຈາ ລະນາຄຳສະເໜີຮ້ອງທຸກ ພາຍໃນ 15 ວັນ ນັບແຕ່ວັນ

# ຂັ້ນຕອນການຮ້ອງທຸ

ການຮ້ອງທຸກ

ຖ້າມີການຮ້ອງທຸກ ຕ້ອງມີການແກ້ໄຂພາຍໃນ 15 ວັນ

ຜູ້ຮ້ອງທຸກຕ້ອງຍື່ນກ່ອນການເຊັນສັນຍາ 14 ວັນ

ເຈົ້າຂອງໂຄງການພິຈາລະນາ 15 ວັນ

ຂະແໜ່ງການເງິນ ພິຈາລະນາ 15 ວັນ

ຄະນະສະເພາະກິດແກ້ໄຂ 15 ວັນ

ຂະແໜງການເງິນ ຂໍໃຫ້ດຳເນີນແກ້ໄຂຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

# ຂັ້ນຕອນການຮ້ອງທຸກ

ຜູ້ຮ້ອງທຸກ

ເຈົ້າຂອງໂຄງການ.(i)

ກະຊວງການເງິນ (ii)

ຄະນະກຳມະການສະເພາະກິດ (iii)

ດຳເນີນການຂັ້ນສານ (iv)

# ການຈັດຊື້ຕາມກອບຕົກລົງ (Framework agreement)

ນອນໃນຮູບແບບການປະມູນແບບເປີດກວ້າງ: ການຈັດຊື້ຕາມກອບຕົກລົງ ແມ່ນການຕົກລົງລະຫວ່າງເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ກັບ ໜຶ່ງ ຫຼື ຫຼາຍຜູ້ສະໜອງສິນຄ້າ ແລະ/ຫຼື ຜູ້ບໍລິການວຽກງານ ເພື່ອເປັນບ່ອນອີງໃນການຊື້ສິນຄ້າ, ຊື້ວັດຖຸປະກອນ, ບໍາລຸງຮັກສາ ແລະ/ຫຼື ບໍລິການວຽກງານໃນກອບເວລາໃດໜຶ່ງ ທີ່ ລະຫວ່າງ 2 ຫາ 3 ປີ ໂດຍການຄາດຄະເນລາຄາ, ຄຸນນະພາບ ແລະ ປະລິມານໃນແຕ່ລະໄລຍະ.

ເງື່ອນໄຂຂອງການຈັດຊື້ຕາມກອບຕົກລົງ ແມ່ນຈະໄດ້ກໍານົດໄວ້ໃນສັນຍາ ແລະ ໄດ້ກໍານົດໃນຄູ່ມືຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

*ແຈ້ງການ ສະບັບເລກທີ 3128/ກງ, ວັນທີ 23 ກັນຍາ 2025*

# ກະສານ ການຈັດຊື້ຕາມກອບຕົກລົງ

1. ສຳລັບ ຜູ້ຈັດຊື້-ຈັດຈ້າງ ຫນຶ່ງຄົນ ແລະ ຜູ້ສະໜອງຫຼາຍຄົນ
2. ສຳລັບ ຜູ້ຈັດຊື້-ຈັດຈ້າງຫນຶ່ງຄົນ ແລະ ຜູ້ສະໜອງຫນຶ່ງຄົນ
3. ສຳລັບ ຜູ້ຈັດຊື້-ຈັດຈ້າງຫຼາຍຄົນ ແລະ ຜູ້ສະໜອງຫນຶ່ງຄົນ
4. ສຳລັບ ຜູ້ຈັດຊື້-ຈັດຈ້າງຫຼາຍຄົນ ແລະ ຜູ້ສະໜອງຫຼາຍຄົນ ຕາມ ກອບຕົກລົງ ແບບລວມສູນ

# ການຈັດຊື້ຕາມກອບຕົກລົງເໝາະສົມ

- ປະເພດ ສິນຄ້າ ທີ່ມີການຈັດຊື້ທີ່ມີທົ່ວໄປ, ປະຈໍາ ແລະ ຕໍ່ເນື່ອງ
- ສິນຄ້າ ແລະ/ຫຼື ການບໍລິການ ທີ່ມີມາດຕະຖານເຕັກນິກ (ສະເປັກ) ບໍ່ມີການປ່ຽນແປງເລື້ອຍ
- ຍາກທີ່ຈະກໍານົດລ່ວງໜ້າກ່ຽວກັບປະລິມານທີ່ແນ່ນອນ ເວລາ ແລະ ເງື່ອນໄຂທີ່ຊັດເຈນ
- ມີຄວາມຕ້ອງການຂອງການຈັດຊື້ຢ່າງຫຼວງຫຼາຍ (ຫຼາຍຜູ້ນໍາໃຊ້)
- ຖ້າຕ້ອງການຫຼຸດຜ່ອນ ຂັ້ນຕອນການປະກອບເອກະສານປະມູນຕ່າງໆ
- ເພີ່ມການແຂ່ງຂັນທາງດ້ານລາຄາ ແລະ ເງື່ອນໄຂອື່ນທີ່ຕິດພັນກັບການປະຢັດງົບປະມານລັດ
- ມີເຄື່ອງມືປະເມີນຜົນ ທີ່ຊັດເຈນ ແລະ ທັນສະໄໝຂຶ້ນ

# ການຈັດຊື້ຕາມກອບຕົກລົງເໝາະສົມ

- ປະເພດ ສິນຄ້າ ທີ່ມີການຈັດຊື້ທີ່ມີທົ່ວໄປ, ປະຈຳ ແລະ ຕໍ່ເນື່ອງ
- ສິນຄ້າ ແລະ/ຫຼື ການບໍລິການ ທີ່ມີມາດຕະຖານເຕັກນິກ (ສະເປັກ) ບໍ່ມີການປ່ຽນແປງເລື້ອຍ
- ຍາກທີ່ຈະກຳນົດລ່ວງໜ້າກ່ຽວກັບປະລິມານທີ່ແນ່ນອນ ເວລາ ແລະ ເງື່ອນໄຂທີ່ຈັດເຈນ
- ມີຄວາມຕ້ອງການຂອງການຈັດຊື້ຢ່າງຫຼວງຫຼາຍ (ຫຼາຍຜູ້ນຳໃຊ້)
- ຖ້າຕ້ອງການຫຼຸດຜ່ອນ ຂັ້ນຕອນການປະກອບເອກະສານປະມູນຕ່າງໆ
- ເພີ່ມການແຂ່ງຂັນທາງດ້ານລາຄາ ແລະ ເງື່ອນໄຂອື່ນທີ່ຕິດພັນກັບການປະຢັດງົບປະມານລັດ

**ມີເຄື່ອງມືປະເມີນຜົນ ທີ່ຈັດເຈນ ແລະ ທັນສະໄໝຂຶ້ນ**

# ເວບໄຊ ຈັດຊື້-ຈັດຈ້າງ

# www.ppmd.mof.gov.la

# ຂອບໃຈ

